# ພຣະເຈົ້າ ເປັນທາງອອກ




ຄອບຄົວຂອງ ລັກກີ່ ເປັນຄອບຄົວທີ່ບໍ່ສະຫງົບ.
"ບັກຮ່າມຶງ."
"ຈັ່ງແມ່ນມຶງເນາະ ອີ່ຮ່ານີ້."
"ໄປຊື້ເຫຼົ້າ ໃຫ້ແມ່ ກິນແດ່."
"ໂດຍ"
ລັກກີ່ ຮູ້ສຶກເສຍໃຈຫຼາຍທີ່ເຫັນແມ່ກິນເຫຼົ້າທຸກມື້.


ຄົນຂ້າງບ້ານກຳລັງເວົ້າຂ້ວນ ແລະດູຖູກຄອບຄົວນີ້.
"ມື້ວານນີ້ເຫັນ ແມ່ລັກກີ່ ເອົາ ເກີບດຶກໃສ່ຫົວຜົວ ຂອງລາວ."
"ຂ້ອຍບໍ່ຢາກໃຫ້ລູກ ໄປຫຼິ້ນນຳລູກ ຂອງລາວ."
"ຟັງແມ່ເດີ! ຕໍ່ໄປນີ້ລູກບໍ່ຕ້ອງໄປ ຫຼິ້ນນຳ ລັກກີ່."
"ໂດຍ"
"ແມ່ຂອງຂ້ອຍ ຫ້າມບໍ່ໃຫ້ ຂ້ອຍໄປຫຼິ້ນກັບ ລັກກີ່."
"ຂ້ອຍຂໍຫຼິ້ນນຳໄດ້ບໍ?"
"ບໍ່ໄດ້! ພໍ່ແມ່ບອກວ່າ ເຈົ້າຈະສົ່ງຜົນ ສະທ້ອນບໍ່ດີ ຕໍ່ພວກເຮົາ."
ລັກກີ່ ຮູ້ສຶກເປັນທຸກໃຈຫຼາຍ ແລະຍ່າງໜີຊ້າໆຜູ້ດຽວ.
M-CH.SOKHA


ໃນຂະນະທີ່ກຳລັງຍ່າງກັບເຮືອນ ລັກກີ່
ໄດ້ຍິນສຽງເພງອອກມາຈາກເຮືອນຫຼັງໜຶ່ງ .
ວຽງ ເຫັນ ລັກກີ່ ກຳລັງ
ຢືນຢູ່ຂ້າງນອກ.
"ເຈົ້າຢາກເຂົ້າມາຟັງນຳ
ພວກເຮົາບໍ?"
"ເຈົ້າຊວນຂ້ອຍບໍ?"
"ແມ່ນແທ້!"


“ຜູ້ສ້າງຜູ້ແຕ່ງ ຊົງຮັກທຸກຄົນ ແລະຢາກໃຫ້ທຸກຄົນ ໄດ້ເຂົ້າໃກ້ ພຣະອົງ ໂດຍສະເພາະ ຜູ້ທີ່ສັງຄົມບໍ່ຍອມຮັບ ກຽດຊັງ. ”


“ໂອ້! ບໍ່ເປັນຕາເຊື່ອເລີຍ! ນັ້ນເວົ້າເຖິງຂ້ອຍນຳບໍ?”


“ແມ່ນແທ້! ພຣະເຈົ້າ ຊົງມີ ຄວາມຮັກສຳລັບຄົນທີ່ຖືກຢຽບຢ່ຳ.”


ເມື່ອອ່ານພຣະຄຳພີ, ອ້ອນວອນ ແລະຮ້ອງເພງແລ້ວ ພວກເຂົາພາກັນຍ່າງໄປສົ່ງ ລັກກີ່.
“ໂຊກດີເດີ.”


ອີແມ່!
ຊ່ວຍແດ່!
ຊ່ວຍແດ່!
ຊ່ວຍແດ່!
ລັກກີ່ ຮ້ອງຂໍຄວາມຊ່ວຍເຫຼືອ ແຕ່ຄົນອ້ອມຂ້າງ
ເຮັດຫູບໍ່ໄດ້ຍິນ ເພາະບໍ່ຢາກເຂົ້າໄປຫຍຸ້ງ.
ແຕ່ພວກທີ່ໄປສົ່ງ ລັກກີ່ ໄດ້ຟັງສຽງຂອງ ລັກກີ່ ແລະຫຼຽວກັບໄປເບິ່ງວ່າ ມີຫຍັງເກີດຂຶ້ນກັບລາວ.
"ລັກກີ່ ມີຫຍັງເກີດຂຶ້ນ?"
ອີແມ່!
M. CH. SOKHA


ແມ່ລັກກີ່ ກິນເຫຼົ້າຫຼາຍຈົນມືນຕາບໍ່ຂຶ້ນ
?..!
!...
!
!
ພວກເຂົາເຈົ້າຊ່ວຍກັນອູ້ມ ແມ່ລັກກີ່ ຂຶ້ນເທິງຕຽງ.
ພວກເຂົາເຈົ້າຊ່ວຍກັນອະນາໄມເຮືອນ ດ້ວຍຄວາມຮັກ ແລະຄວາມອົດທົນ.
M-CH-SOKHA


ມື້ຕໍ່ມາ ໃນຂະນະທີ່ ລັກກີ່ ກຳລັງນັ່ງຢູ່ ໜ້າບ້ານ ຈິນດາ ແລະ ວຽງ ໄດ້ມາ ຊວນ ລັກກີ່ ໄປນະມັດສະການ ພຣະເຈົ້າ ນຳກັນ.
"ລັກກີ່ ໄປນະມັດສະການ ນຳເອື້ອຍບໍ?"
"ໂດຍ! ໄປ!"
ລັກກີ່ ດີໃຈທີ່ມີໂອກາດ ໄດ້ອ່ານພຣະຄຳພີ ແລະ ລັກກີ່ ຮູ້ສຶກພູມໃຈ ຫຼາຍ ທີ່ມີຄົນຍອມຮັບ ຕົນເອງ.
ພຣະເຢຊູ ຊົງຮັກມະນຸດທຸກຊັ້ນຄົນ
M. CH. SOKHA



ຄຳຖາມສົນທະນາ
ເຈົ້າເຄີຍມີຜູ້ໃດຜູ້ໜຶ່ງຊວນ
ເຈົ້າເປັນໝູ່ບໍ່? ປະສົບການນັ້ນ
ເປັນແນວໃດ?
ເຈົ້າຮູ້ຈັກໃຜທີ່ມີປະສົບການ
ຄືກັບ ລັກກີ່ ບໍ? ແລະເຈົ້າຄິດ
ວ່າຄວາມຮູ້ສຶກຂອງລາວ
ຈະເປັນແນວໃດ?




ກິດຈະກຳ
ຈົ່ງຄິດເຖິງຜູ້ໃດຜູ້ໜຶ່ງໃນສັງຄົມ
ຂອງເຈົ້າທີ່ຖືກປະຖິ້ມ ແລະ
ຊອກຫາວິທີທາງມອບ
ຄວາມຮັກແກ່ຜູ້ນັ້ນ.



พระเจ้า ຊົງປົກຄອງ
ໃນສະພາແຫ່ງສະຫວັນ
ແລະເວົ້າວ່າ,
“ຈົ່ງປ້ອງກັນສິດທິຄົນທຸກ
ແລະ ລູກກຳພ້າທັງຫຼາຍ
ຈົ່ງສຸພາບແກ່ຄົນຂັດສົນ ແລະ ຂາດທີ່ເພິ່ງ
ຈົ່ງຊ່ອຍກູ້ເອົາເຂົາເຫຼົ່ານັ້ນທັງໝົດ
ຈາກອຳນາດຂອງບັນດາຄົນຊົ່ວຮ້າຍ.”
ເພງສັນລະເສີນ 82:3-4



© Alongsiders International
www.alongsiders.org
Email: info@alongsiders.org